# ນິທານ

# ບ້ານຂນົມປັງ ແລະສັບສິລຊັ້ຍ

ໜັງສືອ່ານສໍາຫລັບເດັກ. ຫ້ອງສະໝຸດ ໑໙໗໔



# ຄຳນຳ

ໜັງສືອ່ານສອງເລື່ອງ ສັງສິລຈັຍແລະບ້ານຂຶ້ນປົ້ງ ໄດ້ແປມາຈາກບົດລະຄອນນອກພຣະບາດສົມເດັດພຣະພຸດທະເລີດຫລ້ານພາ-ລັຍ (ຣັຊການທີ 2) ຊຶ່ງກ່າວກັນວ່າ ພຣະບາດສົມເດັດພຣະນັ່ງເກົ້າເຈົ້າຢູ່ຫົວ (ຣັຊການທີ 3) ຊົງພົນປາຍຣັຊການທີ 2 ເມື່ອຄັ້ງຍັງດຳຣົງພຣະຍົດ ເປັນພຣະເຈົ້າລູກເທີ້ກົມໝື່ນເຈສະດາບດິນ ບົດລະຄອນນອກເລື່ອງສັງສິລຈັຍແລະບ້ານຂຶ້ນປົ້ງ ເປັນວັນນະກັມທີ່ຊົງຄຸນຄ່າຂອງໄທ ໄດ້ຊື່ຄຳກອນແລະສຳນວນທີ່ຄວາມໄພເຣາະສນຸກສນານ-ຊວນອ່ານເລື່ອງໜຶ່ງໃນຈຳນວນບົດລະຄອນນອກທັງໝົດ.

ກຸ່ມແປຫວັງວ່າໜັງສືສອງເລື່ອງນີ້ ຄົງສ້າງຄວາມສນຸກສນານເພີດເພີນໃນການອ່ານ ແລະເຮັດໃຫ້ເຍົາວະຊົນຂອງພວກເຮົາ ເກີດຄວາມຮັກໃນວັນນະຄະດີໄທອັນເປັນມໍຣະດົກຂອງຊາດເຫລົ່ານີ້, ແລະຖ້າຫາກວ່າໃນການອາດຕົກບົກພ່ອງຫລືວ່າທ່ານມີຄວາມເຫັນຢ່າງໃດທີ່-ກ່ຽວກັບນິທານສອງເລື່ອງນີ້ ໂປດໃຫ້ຄຳແນະນຳແກ່ພວກເຮົາດ້ວຍ ພວກເຮົາຈະຂໍຂອບໃຈເປັນຢ່າງຍິ່ງ.

ທ້ອງສມຸດ
ເຈ.ເອຣ.ອາ.ຊີ=
ບ້ານວິນັຍ ອ.ປາກ=
ຊົມ ຈ.ເລີຍ ປ.ໄທ

ຫົວໜ້າອົງການ : JSRC Bv.

( ກິໂຍະໂກະ ຢາຊູອິ )

ຜູ້ອຳນວຍການຫ້ອງສມຸດ JSRC

( ສຸພັຕຣາ ພູທິຊຍຈັນຍາ )

## ພນັກງານຜູ້ຈັດແປ

1. ນາຍ ລິເຕັງ — ຜູ້ຈັດທຳ (ຫົວໜ້າຫ້ອງສມຸດ)
2. " ທັງລິ່ — ແປມາຈາກບົດລະຄອນໄທ
3. " ລິເຊັງ — ພິມລາວ
4. " ດ່າຊົ່ງ — ແຕ້ມຮູບປະກອບ
5. " ຈັງກູ້ — ກວດ

ພິມຈາກຫ້ອງພິມ
ຈ. ເລີຍ 42150

ບ້ານວິນັຍ ອ. ປາກຊົມ
ປະເທດໄທ.

# ເລື່ອງ = ບ້ານຂນິມປູ

# ນິທານນານາຊາດ

ໂດຍ:



ມານະກັບນາງລີຢູ່ກັບພໍ່ແລະແມ່ລ້ຽງໃນກະທ່ອມເລັກໆ ທີ່ຊາຍປ່າແຫ່ງນຶ່ງ ພໍ່ຮັກແລະເອັນດູມານະແລະນາງລີຫລາຍ ທຸກວັນພໍ່ຈະພາລູກທັງສອງອອກໄປຕັດຟືນໃນປ່າ ພໍ່ຈະເວົ້າເຖິງແມ່ວ່າເປັນຄົນດີຫລາຍ ແຕ່ນ່າເສັຽໃຈທີ່ແມ່ຕ້ອງມາຕາຍກ່ອນລູກທັງສອງຈະໂຕເປັນຫນຸ່ມເປັນສາວ ແຕ່ໂຊກຮ້າຍທີ່ແມ່ລ້ຽງບໍ່ຮັກເດັກທັງສອງຫລາຍເຊັ່ນກັນແມ່ລ້ຽງຄິດກຳຈັດທັງສອງຕລອດເວລາ



ຄືນນຶ່ງນາງໄດ້ບອກກັບສາມີວ່າ "ຕອນນີ້ອາຫານທີ່ຂ້ອຍຖຸນໄວ້ບໍ່ພໍທີ່ຈະລ້ຽງເດັກທັງສອງນັ້ນໄດ້ອີກ ຂ້ອຍຄິດວ່າຈະໃຫ້ນຳເດັກທັງສອງ-ຄົນນັ້ນໄປຖິ້ງໃນປ່າ ບໍ່ຢ່າງນັ້ນຂ້ອຍຕ້ອງອຶດຕາຍແນ່ໆ" "ໂທ່...ຈະໃຫ້ຂ້ອຍເຮັດໄດ້ຢ່າງໃດ ໃນເມື່ອເດັກທັງສອງເປັນລູກຂອງຂ້ອຍ" ສາມີຕອບ "ກໍ່ລູກຂອງເຈົ້າແຕ່ບໍ່ແມ່ນລູກຂອງຂ້ອຍ ໆຈົ່ງເອົາຢ່າງນັ້ນ" ນາງກ່າວ ແລະຢັ້ງຢືນຢັນຂັນແຂງທີ່ຈະໃຫ້ສາມີເອົາເດັກທັງສອງນັ້ນໄປ ຖິ້ງໃນປ່າ, ສາມີຮ້ອງຂໍຢ່າງໃດ ນາງກໍ່ບໍ່ຍອມຟັງ ຈົນໃນທີ່ສຸດສາມີ ຕ້ອງຍອມເຮັດຕາມຄຳເວົ້າຂອງແມ່ລ້ຽງດ້ວຍຄວາມຢ້ານ ມານະກັບນາງລີ-ແລບໄດ້ຍິນເລື່ອງໂດຍຕລອດ.



ຕື່ນມື້ນເອງ ມານະແອບລົງມືໃດເຂົ້າໄປໃນສວນເກັບກ້ອນຫີນ ຕົ້ນກະເປົາ ແລ້ວຮີບກັບຂຶ້ນບ້ານຕາມຄຽງນອນທັນທີ ໂດຍທີ່ພໍ່ແລະແມ່ລ້ຽງບໍ່ເຫັນມານະແອບລົງມາເກັບກ້ອນຫີນແຕ່ເຊົ້າ. ພໍເອີ້ນມານະແລະນາງລີໃຫ້ຕື່ນແຕ່ເຊົ້າ ພໍບອກວ່າຈະພາເຂົ້າປ່າເພື່ອພາໄປຕັດຟືນ ວັນນີ້ແມ່ລ້ຽງເຮັດເປັນໃຈດີ ຫາອາຫານໃຫ້ມານະແລະນາງລີກິນແຕ່ເຊົ້າ "ກິນໃຫ້ຫລາຍໆ ລູກຈະໄດ້ຊ່ວຍພໍ່ແບກຟືນກັບບ້ານໄຫວ ວັນນີ້ແມ່ຈະ ພາໄປສົ່ງທີ່ຊາຍປ່າ" ມານະເດີນຕາມຫລັງພໍ່ແລະແມ່ລ້ຽງຢ່າງຊ້າໆ ແລະແອບໂຍນກ້ອນຫີນໄວ້ຕາມທາງ.



ທັງຫມົດເດີນທາງໄປເລື້ອຍໆ ຈົນຮອດບ່າຍ "ພີ່...ເຮົາພັກກັນຊົ່ວຄູ່ກ່ອນເທີດ!" ນາງລີເວົ້າ "ເປັນຫຍັງວັນນີ້ພໍ່ເຖິງມາຕັດຟືນໃນປ່າລຶກແທ້ ນ້ອງມານະຈະເດີນບໍ່ໄດ້ແລ້ວພີ່" ນາງລຸນບອກພ້ອມກັບເອົາ ມືປາດເຫື່ອທີ່ແກ້ມ ເຮົາທັງສອງຫິວຫລາຍດ້ວຍພີ່ ເຊົາພັກກ່ອນເທີດ!" ທີ່ໂຄນຕົ້ນໄມ້ ມານະກັບນາງລີຫລັບໄປຢ່າງອ່ອນເພຍ ພໍ່ເຂົ້າມາ ຈູບຢ່າງແຜ່ວເບົາ ແລ້ວຮີບໜີຫລັງກັບດ້ວຍຄວາມເສົ້າໃຈ.



ເມື່ອທັງສອງຕື່ນຂຶ້ນມາກໍ່ພົບແຕ່ຄວາມມືດ. ມານະຈັບມືນາງລີ ໄວ້ແໜ້ນ "ບໍ່ຕ້ອງຕົກໃຈ ໄປເລີຍນ້ອງ ທາງກັບບ້ານເຮົາບໍ່ຫລົງ ເມື່ອຕອນອ້າຍຫາຊົມກ້ອນຫີນໃສ່ກະເປົາໄວ້ ເວລາເດີນທາງມາອ້າຍກໍ່ເອົາກ້ອນຫີນໂຮຍຕາມທາງມາຕລອດເວລາ" ມານະມອງແລ້ວບອກນາງລີນ້ອງ ສາວວ່າ "ເບິ່ງນັ້ນແນ້...ແສງຈັນສ່ອງສວ່າງເທິງກ້ອນຫີນທີ່ອ້າຍໂຮຍ ໄວ້ເຮົາເດີນຕາມກ້ອນຫີນນັ້ນເຖີດ ຕ້ອງຣະວັງຕົວສັດປ່າເທົ່ານັ້ນ" ແລ້ວທັງສອງກໍ່ເຣີ່ມເດີນທາງ ແລະກັບເຖິງບ້ານໃນທີ່ສຸດ.



ຜູ້ເປັນພໍ່ດີໃຈຫລາຍ ຂນະທີ່ແມ່ລ້ຽງມຽງດ້ວຍຄວາມໂກດແລະກຽດ ເດັກທັ້ງສອງຫລາຍຍ້ອນ "ບໍ່ໄດ້...ເດັກທັ້ງສອງຈະຢູ່ໃນນີ້ບໍ່ໄດ້ເດັດຂາດ ເລີຍ" ແມ່ລ້ຽງເວົ້າຂື້ນດ້ວຍສຽງກ້ອງກາດ ມື້ອື່ນແກ່ຕ້ອງເອົາເດັກສອງ ຄົນນີ້ໄປໄວ້ໃນປ່າໃຫ້ໄດ້ ຢ່າໃຫ້ກັບບ້ານໄດ້ໂດຍ ເດັດຂາດ ຖ້າເດັກ ສອງຄົນນີ້ກັບມາໄດ້ຄົງມີເຣື່ອງແນ່ ໆ" ເມື່ອເດັກທັ້ງສອງເຂົ້າ ນອນ ແລ້ວ ແມ່ລ້ຽງປິດປະຕູບ້ານຢ່າງແໜ້ນໜາ ນາບະບໍ່ສາມາດໄປເກັບກ້ອນ ຫີນໄດ້ອີກ ຈຶ່ງກັບຂື້ນນອນແລະຄິດບໍ່ອອກວ່າຈະເຮັດຢ່າງໃດ ໃນມື້ອື່ນຈະ ຖືກນຳໄປຖິ້ມໄວ້ໃນປ່າ.



ພໍຮຸ່ງເຊົ້າພໍ່ໃຫ້ຂນົມປັງແກ່ເດັກທັງສອງ ກ່ອນຈະເດີນທາງກັນຕໍ່ ໄປສູ່ປ່າລຶກທຶບເດີຽໄປ ຄວນແມ່ລ້ຽງອອກໄປໃນປ່າດ້ວຍ ເພາະບໍ່ໄວ້ໃຈຜົວ ກົວຈະປ່ອຍເດັກທັງສອງກັບບ້ານອີກ ມານະເດີນຕາມຫລັງພໍ່ກັບແມ່ລ້ຽງ ເຂົາໂປຍຂນົມປັງໄປຕາມທາງເດີນ ເພື່ອຫວັງວ່າເສບຂນົມກໍ່ຈະສາມາດຊ່ວຍຊີ້ທາງໃຫ້ເຂົາເດີນກັບບ້ານໂດຍບໍ່ຫລົງທາງ



ຈົນເດີນຕໍ່ໄປບໍ່ໄຫວຈຶ່ງຢຸດພັກ...ມານະກັບນາງລີບາງເອີນນອນ ຫລັບ ແມ່ລີ້ງຮີບບອກໃຫ້ພໍ່ຂອງເດັກທັງສອງຮີບໜີກັບບ້ານ. ເມື່ອເຂົາທັງສອງຕື່ນຂຶ້ນມາກໍພົບວ່າປ່າມືດແລ້ວ "ບໍ່ຕ້ອງຕົກໃຈນາງລີ ອ້າຍໄດ້ໂປຍເສດເຂົ້ານົມປັງໄວ້ຕາມທາງທີ່ເດີນຜ່ານມາແລ້ວ. ເຮົາຈະເດີນກັບບ້ານຕາມທາງນັ້ນ" ມານະປອບນ້ອງ...ແຕ່ອນິຈາເອີຍ ນົກໄດ້ກິນເສດຂົ້ນມັ້ນໝົດ ດັ່ງນັ້ນມານະກັບນາງລີເດີນເລາະຫລົງຢູ່ໃນປ່າດ້ວຍຄວາມຫິວແລະຫວາດກົວ.



"ໂຫຼວິ..ມາເບິ່ງແມ້" ມານະຕະໂກນແລະຈຸ່ມໄປຍັງບ້ານຫລັງເລັກນ້ອຍນູ້ "ເຮົາພົບບ້ານຄົນແລ້ວ. ເຮົາເຂົ້າໄປຂໍອາຫານກິນກັນເຖິດ ! ແລະຂໍອາສັຍເຂົານອນສັກຄືນ ແລ້ວຄ່ອຍຫາທາງກັບບ້ານ ເຂົ້າໄປໃນບ້ານກັນເຖິດ" ມານະຈູງນ້ອງ ກຳແພງບ້ານເຮັດດ້ວຍຊ໊ອກໂກແລດ ປະຕູບ້ານເປັນຂົນມປັງ ຫລັງຄາບ້ານເຮັດດ້ວຍຂົນມປັງເຄືອບນ້ຳຕານປະ ກັບດ້ວຍທອຟີ. ມານະແລະນາງລີວເຂົ້າໄປຫັກສ່ວນຕ່າງໆຂອງບ້ານກິນດ້ວຍຄວາມຫິວ.



ທັນໃດນັ້ນບ້ານກໍເປີດອອກ ມີຍິງຊາຣາຍິ້ມໜ້າອອກມາ "ເບິງໄປ ຍັງເດັກທັງສອງເໝືອນຈະຫິວຫລາຍ" ຍິງຊາຣາວ່າທັກທາຍ " ເຂົ້າມາໃນບ້ານກ່ອນ ຢາຍຈະຫາອາຫານມາໄວ້ຕ້ອນຮັບໝູ່ແລ້ວ" ເມື່ອເດັກທັ້ງສອງກິນອາຫານແຊບ ຈົນອີ່ມ ຍິງຊາຣາກໍນຳພວກເຂົາໄປ ຍັງຕຽງນອນອັນອ່ອນນຸ່ມດ້ວຍຄົນນຶກ "ຫລານຈົ່ງນອນຫລັບກັບເຖິດ ຢ່າກັງວົນໃຈເລີຍ" ທັງສອງຫລັບຢ່າງສບາຍດ້ວຍຄວາມອ່ອນເພຍ.



ຮຸ່ງເຊົ້ານາງລີຕື່ນຂຶ້ນບໍ່ພົບຜູ້ເປັນອ້າຍ ຈຶ່ງວິ່ງໄປຖາມຍິງຊາຣາ "ອ້າຍຂອງຂ້ອຍຢູ່ໃສ" ຍິງຊາຣາຫົວແລ້ວເວົ້າຂຶ້ນວ່າ "ມາກັບຂ້າຊິ ເຈົ້າທັງສອງຄົງບໍ່ຮູ້ວ່າຂ້ອຍເປັນແມ່ມົດ ຂ້ອຍຈັບອ້າຍຂອງເຈົ້າໄປຂັງ ຮິ ...ຮິ ເມື່ອເຂົາອ້ວນຫລາຍໆຂ້ອຍຈະເອົາຍ່າງກິນ ສ່ວນເຈົ້າກໍເປັນຄົນຮັບໃຊ້ຂອງຂ້ອຍ" ທຸກໆ ວັນແມ່ມົດຈະມາຈັບນິ້ວມືຂອງມານະເບິ່ງວ່າຕົນອ້ວນແລ້ວຫລືຍັງ. ແຕ່ມານະໃຊ້ກະດູກໄກ່ແທນນິ້ວຂອງເຂົາ ເນື່ອງຈາກແມ່ມົດມອງບໍ່ເຫັນ ໃນທີ່ສຸດແມ່ມົດກໍເບື່ອໜ່າຍທີ່ຈະເຝົ້າໃຫ້ມານະອ້ວນກໍເລີຍບອກໃຫ້ນາງລີວ່າ "ໄປຕິດໄຟທີ່ເຕົາອົບ ຂ້ອຍຈະຍ່າງອ້າຍ ຂອງເຈົ້າກິນສັກທີ" "ຂ້ອຍຕິດໄຟບໍ່ເປັນ" ນາງລີຕອບດ້ວຍນ້ຳຕານອງໜ້າ.



ແມ່ມົດໂກດຫລາຍ ນາງຈັດແຈງເປີດປະຕູເຕົາອົບ ແລ້ວຈູດໄຟເອງ ເພື່ອຈະຍ່າງມານະເປັນອາຫານໃຫ້ໄດ້ ຂນະທີ່ກອງໄຟເຣີ່ມລຸກຂຶ້ນ ນາງແມ່ມົດເກີດລືມຕົວ ນາງລີຈາວີ່ງເຂົ້າໄປພລັກນາງແມ່ມົດຢ່າງ ສຸດແຮງ. ແມ່ມົດຖລາລົ້ມກິ້ງເຂົ້າໄປໃນເຕົາອົບ ນາງລີຣີບປິດປະຕູເຕົາອົບທັນທີ. ແລ້ວຊ່ວຍມານະອອກຈາກຫ້ອງຂັງທັນທີ ທັງສອງຮີບໜີອອກຈາກບ້ານຂນົມປັງ ພ້ອມນຳເຄື່ອງເພັດຂອງແມ່ມົດທີ່ເຕັມຫີບອອກມາດ້ວຍ.



ລະຫວ່າງທີ່ທັງສອງຫາທາງກັບບ້ານກໍໄປພົບລຳທານ ເດັກທັງສອງບໍ່ສາມາດທີ່ຈະຂ້າມລຳທານໄດ້ ຈຶ່ງນັ່ງຮ້ອງໄຫ້ຢູ່ທີ່ຮິມລຳທານ ບັງເອີນຫ່ານຕົວນຶ່ງກຳລັງວ່າຍນ້ຳຢູ່ ຫ່ານຈຶ່ງອາສາພາເດັກທັງສອງສົ່ງຈົນ ເຖິງໃນປ່າ "ຂອບໃຈຫລາຍເດີ!" ທັງສອງຂອບໃຈຫ່ານແລ້ວວິ່ງໄປ ຍັງກະທ່ອມ ທີ່ບໍ່ຫ່າງຈາກລຳທານປັນໃດນັກ



ບໍ່ນານມານະແລະນາງລິກກັບເຖິງບ້ານ "ພໍ່..." ມານະກັບນາງລິຕະໂກນເອີ້ນພໍ່ດ້ວຍຄວາມດີໃຈ ພໍ່ຂອງເດັກທັງສອງວິ່ງອອກມາຈາກກະທ່ອມ ດ້ວຍຄວາມດີໃຈທີ່ເຫັນລູກທັງສອງກັບມາ ແລ້ວເລົ່າໃຫ້ລູກ ໆ ຟັງວ່າ ແມ່ລ້ຽງໃຈຮ້າຍໄດ້ໜີໄປແລ້ວ ຕັ້ງນັ້ນທັງສາມຄົນຈຶ່ງຢູ່ດ້ວຍກັນຢ່າງມີຄວາມສຸກຕລອດມາ

(ຈົບ)

# ເຣື່ອງ

# ສັງສິລໄຊ

## ໜັງສືອ່ານສຳຣັບ
## ເດັກໆຊັ້ນມຫາບໂຍ
## ຣາມໂທ_

16

**ໂດຍ:**

ອ່ານແລ້ວ ເຫັນວ່າ ເປັນເລື່ອງ ສັງສິນໄຊ ຣະບັບ (version) ຂອງໄທ ທີ່ຕ່າງກັບ ສັງສິນໄຊ ຂອງລາວ . ຜູ້ແປ ຍັງບໍ່ເຂົ້າໃຈພາສາໄທດີ ຈຶ່ງແປຜິດໆ .



ທ້າວເສນາກຸມ ເປັນກະສັດຜູ້ຄອງນະຄອນທີ່ອຸດົມສົມບູນ ພຣະອົງມີມະເຫສີເຈັດອົງຊຶ່ງເປັນອ້າຍນ້ອງກັນ ໂດຍມີນາງປະທຸມເປັນນ້ອງສຸດທ້ອງ ທ້າວເສນາກຸມຕ້ອງກັນມີໂອຣົດເປັນຣັຊທາຍາດ ຈຶ່ງໃຫ້ມະເຫສີທັງເຈັດແລະບັນດານາງສນົມຈັດພິທີບວງສວງຂໍໂອຣົດ



ຕໍ່ມາບໍ່ນານ ມະເຫສີທັງເຈັດຮວມທັງນາງໄກຣສອນຈຶ່ງເປັນສົມ ໄດ້ຊົງຕັ້ງພຣະທ້ອງພ້ອມ ໆ ກັນ ນາງໄກຣສອນຄອດລູກກ່ອນ ແຕ່ລູກທີ່-ເກີດມາເປັນຣາຊສີ ນາງຈຶ່ງຕັ້ງຊື່ວ່າ "ສິງຫຣາ"



ສ່ວນມະເຫສີທາງເຈົ້າຕົນ ໄດ້ປະສູດໂອຣົດທາງໜຶ່ງ ມະເຫສີອົງໜຶ່ງຕັ້ງຊື່ໂອຣົດວ່າ "ສີສົນ" ສ່ວນນາງປະທຸມມະສາເທວີທີ່ຈັກປະສູດໂອຣົດທີ່ມີຄວາມມະຫັສຈັນຈາກມະນຸດທົ່ວໄປ ຄື ເມື່ອໂອຣົດເກີດມາ ມີສິງ ສອນ ກັບ ພຣະຂັນ ເປັນອາວຸດຕິດຕົນມາດ້ວຍ ຈຶ່ງຕັ້ງຊື່ໂອຣົດວ່າ "ສັງສິລັຈຸຍ"



ມະເຫສີທັງຫົກມີຄວາມອິດສາຍານາງປະທຸມນ້ອງສາວຂອງຕົນທີ່ໄດ້-ຈະເລີນມີບຸນຍາທິການ ຈຶ່ງຄິດແຜນການຮ້າຍຈະກຳຈັດນ້ອງສາວ ໂດຍຕິດ-ສິນບົນໂຫລໃນວັງໃຫ້ທູນທ້າວເສນາກຸມພ່າ ສັງສີລະຊັຍກັບສັງທອງເປັນກາ-ລະກິນີ ໃຫ້ຂັບໄລ່ອອກຈາກເມືອງທັງແມ່ແລະລູກ



ທ້າວເສນາກຸມຫລົງເຊືອຄຳທຳນາຍ ຈຶງຂັບໄລ່ນາງປະທຸມ ນາງໄກຣສອນ ແລະໂອຣົດອອກຈາກເມືອງໄປ

ທັງສີ່ຈຶງຕ້ອງຈັດເຊພເນຈອນໄປໃນປ່າທີ່ເຕັມໄປດ້ວຍອັນຕຣາຍ-ແລະສັດຣ້າຍ




ກ່າວເຖິງພຣະອິນຊຶ່ງຢູ່ບົນສວັນ ໄດ້ຊາບເຣື່ອງ ແລະເຫັນວ່າ ສັງ ສິລັຊຍເປັນຜູ້ມີບຸນຍາທິການ ຈຶ່ງລົງມາເນຣະມິດເມືອງໝັ້ນຄົງແລະສວຍ ງາມ ໃຫ້ນາງປະທຸມ ນາງໄກຣສອນ ສັງສິລຊັຍ ແລະສິງຫຣາ ເອົາໄປ ຢູ່ໃນເມືອງນັ້ນ



ເວລາຜ່ານໄປໂອຣົດທັ້ງສີ່ຂອງທ້າວເສນາກຸນຈະເລີນວັຍຂຶ້ນ - ວັນນຶ່ງທ້າວເສນາກຸນເອີ້ນໂອຣົດມາພົບແລະເລົ່າເຣື່ອງຄວາມທຸກຂອງ - ພະອົງວ່າ ເມື່ອຫລາຍສິບປີກ່ອນ ພະອົງມີນ້ອງສາວຄົນນຶ່ງ ຊື່ນາງເກ-ສອນສຸມົນທາ ຢູ່ມາວັນນຶ່ງທ້າວກຸມພັນຊຶ່ງເປັນພະຍາຍັກໄດ້ມາລັກພາເອົາ-ນາງໄປເປັນມະເຫສີ ທ້າວເສນາກຸນບໍ່ສາມາດໄປຊ່ວຍນາງໄດ້ ເວລານີ້ພະອົງຢາກໃຫ້ໂອຣົດທັ້ງສີ່ໄປຊ່ວຍຕາມນາງເກສອນສຸມົນທາກັບມາ-ໂອຣົດທັ້ງສີ່ຈຳຕ້ອງຮັບລຳການພະປະສົງຂອງພະບິດາ



ວັນນຶ່ງທ້າວເສນາກຸມ ແລະ ໂອຣົດທັງຫົກ ສເດັດອອກລ່າສັດໃນ-
ຢູ່ແຫ່ງນັ້ນ ສິສັນ ໂອຣົດອົງໂຕຊຶ່ງມີນິສັຍເກເຣນມາກ ໄດ້ພົບສັງສິລຊັຍຍິມ
ລອງວິເສດ ຈຶ່ງຫລອກວ່າທ້າວເສນາກຸມສັ່ງໃຫ້ສັງສິລຊັຍແຜລງສອນຕ້ອນ
ສັດໄປໃຫ້ເບິ່ງ ສັງສິລຊັຍຫລົງເຊື່ອຈຶ່ງທຳຕາມ



"ໃຜເປັນຜູ້ຕ້ອນຝູງສັດເລົ່ານີ້ມາ" ທ້າວເສນາກຸມຕຣັສວ່າ. "ຂ້າ ພຣະພຸດທະເຈົ້າເອງ ພະຍ່ະຄ່ະ" ສີສົນຮັບຄຳອ້າງ "ເທົ່ງຫລາຍລູກຣັກ ເຈົ້າມີຣິດເດຊາຫລາຍ ຂໍໃຫ້ເຈົ້າພານ້ອງ ໆໄປຕິດຕາມ ອາຂອງພວກ - ເຈົ້າເຖີດ" ທ້າວເສນາກຸມຣັບສັ່ງແກ່ສີສົນ.

ດັ່ງນັ້ນ ສີສົນຈຶ່ງໄປຫາສັງສີລຈັຍກັບສິງຫຣາແລະລວງວ່າ ທ້າວເສນາກຸມມີຄຳສັ່ງໃຫ້ໄປຊ່ວຍຕາມຫານາງເກສອນສຸມນະທາ.



ສັງສິລຊັຍແລະສິງຫລາ ຈຶ່ງໄປລາພານດາທັ້ງສອງແລະອອກເດີນທາງໄປກັບໂອຣົດທັງຫົກ ທັງຫມົດເດີນທາງມາຈົນເຖິງຝັ່ງທະເລ ສັງສິລຊັຍຂີ່ສິງເຫາະຂ້າມທະເລໄປຜູ້ດຽວ ແລະໃຫ້ສິງຫລາຢູ່ກັບໂອຣົດທັງຫົກ-ເພາະທາງທີ່ຈະໄປມີອັນຕຣາຍຫລາຍ ແລະໂອຣົດທັງຫົກບໍ່ກ້າຂ້າມຝັ່ງທະເລໄປ.

24/VII ຫ້າມຈຳໜ່າຍ



ທີ່ເມືອງຟ້າ ຂະນະນັ້ນທ້າວກຸມພົນໄປປ່າ ສັງສິລຊັຍຈຶ່ງລອບເຂົ້າໄປຫານາງເກສອນສຸມມະທາ.

"ອ້າຍບໍ່ກ້າໜີດອກ ເພາະທ້າວກຸມພົນມີຣິດຫລາຍ ຄົງຈະຕາມ-ໄປທຳຮ້າຍເຈົ້າທັງສອງໄດ້ ຂໍເຈົ້າຈົ່ງກັບໄປເຖີດ" ນາງເກສອນສຸມມະທາກ່າວ ສັງສິລຊັຍສົ່ງພລັງສອນອອກອຳນາດ ເຮັດໃຫ້ເກີດແສງສັ່ນສະເທືອນໄປທົ່ວ.



ທ້າວກຸມພັນໄດ້ຍິນສຽງພແລວງສອນຈົວຣົບກັບເຈົ້າເມືອງ ນາງເກສອນສຸມນະທາໃຫ້ສົງສິລັຈຸຍຊ່ອນຕົວໃນພຸ່ງໄມ້ ຊຶ່ງທ້າວກຸມພັນນອນຫລັບ-ແລ້ວ ສົງສິລັຈຸຍຈົ່ງອອກມາຈາກທີ່ຊ່ອນແລະພານາງເກສອນສຸມນະທາ - ອອກໄປຊ່ອນຕົວໃນຖ້ຳນອກເມືອງ.



ສັງສິລຈັຍກັບເຂົ້າເມືອງຍັກ ແລະຕໍ່ສູ້ກັບທ້າວກຸມພັນ ທ້າວກຸມພັນເສັຽທີຈຶ່ງເຫາະໜີໄປ ສັງສິລຈັຍຈຶ່ງພແລງສອນຂ້າມທະເລເພື່ອຮຽກສິງຫຣາໃຫ້ມາຮັບກິນແລະນາງເກສອນສູມນະທາ.



ທ້າວກຸມພັນເມື່ອໜີມາໄດ້ ຈຶ່ງເຫາະຂຶ້ນໄປຂໍໃຫ້ເທວດາຊ່ວຍເນຣະມິດດອກຈໍາປາໃຫ້ແປງເປັນມານດາຂອງສັງສິລຊັຍ ເທວດາຍ້ານພຍາຍັກຈຶ່ງເນຣະມິດໃຫ້ ທ້າວກຸມພັນຈຶ່ງເຫາະມາຫາສັງສິລຊັຍ ແລະເວົ້າວ່າ "ເຈົ້າໜຸ່ມນ້ອຍ ຈົ່ງມາເບິ່ງຊິວ່າ ໃຜທື່ຖືກຂ້າຈັບມາຖ້າເຈົ້າຍັງມີຄວາມກະຕັນຍູຕໍ່ແມ່ຂອງເຈົ້າ ຈົ່ງຄືນມາງເກສອນສູ່ມະຫາເທົ້າຂ້າເສັຽ" ທ້າວກຸມພັນຫລອກສັງສິລຊັຍ.



ສັງສິລຊັຍຈະຕີນາງເກສອນສຸມນະທາໃຫ້ ແຕ່....

"ຊ້າທ່ອນນ້ອງຂ້າ ອ້າຍຄິດວ່າຈະຕ້ອງເປັນອຸບາຍຂອງພຍາຍັກ ນ້ອງຈົງລອງສົ່ງຜແລງສອນໄປຍັງພຍາຍັກນັ້ນເຖີດ" ສິງຫຣາທ້າວແນະນຳ ທັນທີທີ່ສັງສິລຊັຍຜແລງສອນໄປ ຮູບນິມິດກໍກາຍເປັນດອກຈຳ-ປາຕາມເດີມ ສັງສິລຊັຍຈຶ່ງຜແລງສອນຊ້ຳໄປອີກ ທ້າວກຸມພັນຕ້ອງສອນທີສອງອີກ.

"ນ້ອງຂ້າເຈົ້າຈົງໄປຮັບລູກສາວຂອງເຮົາທີ່ເມືອງຂອງພຍາ - ນາຄດ້ວຍເຖີດ" ທ້າວກຸມພັນເວົ້າກັບນາງເກສອນສຸມນະທາກ່ອນທີ່ຈະ-ເຖິງແກ່ຄວາມຕາຍ.



ນາງເກສອນສຸມມະທາຈຶ່ງຂໍຮ້ອງໃຫ້ສັງສິລຊັຍໄປຮັບລູກສາວຂອງນາງທີ່ເມືອງພຍານາຄ ໂດຍໃຫ້ໄປທ້າພຍານາຄເຫລັ້ນສກາ ພຍານາຄ-ແພ້ເກີດຣົບກັນແຕ່ພຍານາຄສູ້ບໍ່ໄດ້ຈຳຕ້ອງຍອມໃຫ້ສັງສິລຊັຍພານາງສີສຸ-ພັນທິດາຂອງນາງເກສອນສຸມມະທາໄປ.



ສັງສິລຈັຍພານາງເກສອນສຸມມະທາແລະທິດາເທາະກັບມາຍັງ-ປ່ງກາະເລ ໂອຣົດທັງຫົກມີຄວາມຣິສຍາໂກດວ່າທ້າວເສນາກຸມຈະນິຍົມ-ຊົມຊອບສັງສິລຈັຍຫລາຍກ່ວາພວກຕົນ ຈຶ່ງຄິດຈະຂ້າສັງສິລຈັຍເສັຽ.



ສີສົມແລະໂອຣົດທັງຫົກຈຶ່ງອອກອຸບາຍພາສັງສິລໄຊຍ໌ໄປເດີນ ທ່ອມ ບົນພູເຂົາຈົນເຖິງເຫວແຫ່ງນຶ່ງ. "ນ້ອງຂ້າ ຈົ່ງວາງສິນກັຍພຣະ ຂັນ ໄວ້ກັບພື້ນກ່ອນແລ້ວມາເບິ່ງເຫວນດູ! ມັນສວຍງາມແທ້ງ" ສີສົມເອີ້ນ ໃຫ້ມາເບິ່ງ ສັງສິລໄຊຍ໌ຫລົງເຊື່ອຈຶ່ງຖືກໂອຣົດທັງຫົກຜລັກຕົກລົງໄປ ໃນ ເຫວ.



ຈາກນັ້ນ ໂອຣົດທັງຫົກຈຶ່ງພານາງເກສອນສຸມນະທາແລະທິດາເຂົ້າເຝົ້າທ້າວເສນາກຸມແລະທູລວ່າພວກຕົນເປັນຜູ້ຊ່ວຍນາງທັງສອງມາ ແຕ່ນາງທັ້ງສອງຮ້ອງໃຫ້ ທ້າວເສນາກຸມຈຶ່ງກ່າວຖາມ ນາງເກສອນສຸມ ນະທາຈຶ່ງເລົ່າເຣື່ອງຂອງສັງສິຊັຍໃຫ້ຟັງ.

"ບໍ່ເຫັນດອກ!"ສີສັນຖຣງ "ເຮົາຈະໃຫ້ໂຫນມາທຳນາຍເຂົ້າມາທຳນາຍເຣື່ອງເຫຼົ່ານີ້ເອງ" ທ້າວເສນາກຸມເວົ້າ ໂຫນມີຄວາມຢ້ານໂອຣົດທັ້ງຫົກຈຶ່ງເວົ້າວ່າ ນາງເກສອນສຸມນະທາສິຟັນເຟືອນ ທຳໃຫ້ນາງນ້ອຍໃຈຫລາຍ ຈຶ່ງພາທິດາອອກຈາກເມືອງ ເພື່ອຕາມຫາສັງສິ ຊັຍທ້າວເສນາກຸມຈຶ່ງຕິດຕາມໄປດ້ວຍ.



ທ້າວຍັ້ນເດີ້ວສົງສຸ້ຍເມື່ອໄດ້ຟັງຄຳເຂົາຂອງນັ້ນ ພຣະອິນໄດ້ ມາຊ່ວຍພາອົນນາງຊ່ວຍແລະພາກັບໄປເມືອງ ມອບດາທາງສາງແລະສີທຣາມດີໃຈຫລາຍທີ່ສົງສຸ້ຍຍັງມີຊີວິດຢູ່ ແລະກ່າວຕ້ອນຮັບຕຣາຍ ຈາກໂອຣົດທັງສາມ.

24/VII
ຫ້າມຈຳໜ່າຍ



ວັນນຶ່ງໃນຣະຫວ່າງທີ່ທ້າວເສນາກຸມກັບນາງເກສອນສຸມນະ ທາ ແລະທິດາກຳລັງຕາມຕາສັງສິຈຸຍຢູ່ນັ້ນ ສັງສິຈຸຍໄດ້ພາສິງຫຣາມ ອອກມາທ່ຽວປ່າຈຶ່ງໄດ້ພົບທ້າວເສນາກຸມທຸກຄົນມີຄວາມຍິນດີຫລາຍ ໂດຍທ້າວເສນາກຸມ ເມື່ອຮູ້ຄວາມຈິງທັງໝົດ ຈຶ່ງເວົ້າວ່າ "ລູກຮັກ ພໍ່ດີໃຈທີ່ໄດ້ພົບລູກ ເຈົ້າຈົ່ງພາພໍ່ໄປຫາແມ່ເຈົ້າທັງສອງ ເພື່ອຮັບກັບໄປ ບ້ານເມືອງກັນເຖີດ!"



ສັງສິລຈັຍແລະສິງຫຣາມາຂໍກັບມານດາກ່ອນ ເພາະຮູ້ວ່າມານດາທັງສອງຍັງຄະເດພຣະບິດາຢູ່ ທັງສອງກັບໄປຫາມານດາແລະອ້ອນວອນໃຫ້-ຄືນດີກັບທ້າວເສນາກຸດແຕ່ນາງປທຸມແລະນາງໄກສອນບໍ່ຍອມ ສັງສິລຈັຍແລະສິງຫຣາຈຶ່ງໃຊ້ວິທີສຸດທ້າຍຄື: ສັງສິລຈັຍຊັກດາບອອກມາໝາຍຈະຕັດຄໍຕົນເອງ ແລະສິງຫຣາກໍ່ຄວ້າເຊືອກເພື່ອນຳໄປຜູກຄໍຕາຍ ທັງສອງນາງຈຶ່ງຍອມຕົກລົງ.



ທ້າວເສນາກຸມຈຶ່ງພາທັງໝົດກັບບ້ານເມືອງ ເມື່ອໄປເຖິງ ທ້າວເສນາກຸມສອບສວນຄວາມຈິງຈາກມເຫສີທັງຫົກອົງ ແລະໂຫຣາທັງຫົກຈົນຮູ້ຄວາມຈິງ ພຣະອົງຈຶ່ງສັ່ງໃຫ້ປະຫານຊີວິດທັງໝົດ ຣວມທັງໂຫຣ ດ້ວຍ

"ປະຫານອາພັຍໂທດແກ່ພວກຂ້າດ້ວຍເຖີດ! ຂ້ານ້ອຍແລະລູກ ບໍ່ເຄີຍຄິດຈະພຍາບາດໃຜ" ນາງປທຸມເວດີຮ້ອງຕໍ່ທ້າວເສນາກຸມ ພຣະອົງຈຶ່ງຍອມອາພັຍໂທດໃຫ້ ທັງໝົດຈຶ່ງຣອດຊີວິດແລະຕ່າງກັບຕົວ ເປັນຄົນດີ ທຸກຄົນຈຶ່ງຢູ່ຮ່ວມກັນຢ່າງມີຄວາມສຸກຕລອດມາ 167000ປີ.

* ຫາກທ່ານໃດມີຄວາມຄິດເຫັນຢ່າງໃດກະຣຸນາ ຈ.ມ ຫາ ຫ້ອງການ. ເຈ.ເອສ໌.ອາຣ໌.ຊີ. <u>ພແນກຫ້ອງສະມຸດພົມ</u>"



ຈົບ

PRINTED BY JSRC PRINTING PROGRAMME
BAN VINAI CAMP

ອຸທິນ ບຸນຍາວົງ